*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 72-76*
*https://doi.org/10.69692/SUJMRD10special72*

# Study the Need to Develop Principles for Using online Media in the Development of Mass Communication Work (Radio, Television, Print media) of the Department of Press, Culture and Tourism in Luang Prabang Province

**Chanthaphone SAIYVONGSAN, Vinath MEKTHANVANH, Singthong PHEUAPHOM, Phone PHENGPHANYA, Boy DUANGCHANH**

*Department of Organizational Resource Management, Office of Research and Academic Services, Souphanouvong University Lao PDR*

***Correspondence:** Chanthaphone SAIYVONGSAN, Department of Organizational Resource Management, Office of Research and Academic Services, Souphanouvong University Lao PDR Tel: 020 22999880 , Email: Chanthaphonexaiyvongsan@su.edu.la*

***Submitted: December 05, 2024***
***Revised: December 15, 2024***
***Accepted: December 31, 2024***

**Abstract**

The purpose of this study is to investigate the need of principles development use in online media to develop the mass communication work (radio, television, print media) of the Department of Information, Culture and Tourism of Luang Prabang Province. It was conducting a quantitative research study by using questionnaire to collect data. And using the SPSS version 2022 to analize the data.

The result found that the need of principles development use in online media to develop the mass communication work of the Department of Information, Culture and Tourism of Luang Prabang Province was in the high level especially the need to develop the aspect of refraining from responding with violence is in high need of development with a mean value of 4.38; SD = 0.68 and the need to develop the aspect of being careful in using your words and language correctly with a mean = 4.38; SD = 0.68, followed by the need to develop the aspect of being careful in using online social media with a mean = 4.21; SD = 1.11, the need to develop the aspect of the organization or department that is responsible for using online social media with a mean = 4.21; a SD =1.11. Next, the need to develop the aspect of using social media that is limited to the communication unit of using online social media with a mean  = 4.31; SD = 0.54; the need to develop the aspect of avoiding using online social media with a mean = 4.14; SD = 1.03; the need to publicize on behalf of the organization is in high need the mean = 3.93; SD = 0.96; The need for organizational development is high with a mean = 3.79; SD 0.90, and the need for development in the use of social media images has a mean=3.69; SD = 0.89.

**Key words:** principles, online media, development, mass communication

## 1. ພາກສະເໜີ

ປັດຈຸບັນການນຳໃຊ້ສື່ສັງຄົມອອນລາຍລາຍ (Social Media) ມີພາລະບົດບາດໜ້າທີ່ສຳຄັນ ທີ່ເປັນກະບອກສຽງຮັບໃຊ້ສັງຄົມເຂົ້າໃນທຸກຂົງເຂດວຽກງານ ເຊັ່ນ ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມເປັນຕົ້ນ. Vilatsana (2017) ໄດ້ໃຫ້ນິຍາມວ່າ ເຄືອຂ່າຍສັງຄົມອອນລາຍໄດ້ຮັບຄວາມນິຍົມແຜ່ຫຼາຍຍ້ອນ ການສື່ສານໃນສັງຄົມອອນລາຍບໍ່ຈຳກັດລະບົບປະຕິບັດການຂອງເຄື່ອງຄອມພິວເຕີທີ່ຕ່າງລະບົບປະຕິບັດກັນ ກໍສາມາດຕິດຕໍ່ສື່ສານກັນໄດ້ ຜູ້ໃຊ້ຍັງສາມາດມີການຕິດຕໍ່ສື່ສານກັນໄດ້ຢ່າງອິດສະຫຼະ ແລະ ຍັງສາມາດສ້າງກຸ່ມຄວາມສົນໃຈຂຶ້ນໄດ້ເອງອີກດ້ວຍ, ການສື່ສານໃນສັງຄົມອອນລາຍບໍ່ຈຳກັດຮູບແບບຂອງຂໍ້ມູນ ເຊິ່ງບໍ່ໄດ້ມີຂໍ້ມູນທີ່ເປັນຂໍ້ຄວາມຢ່າງດຽວ ຫຼື

ອາດມີພາບປະກອບລວມໄປເຖິງຂໍ້ມູນຊະນິດນັ້ນຕີມີເດຍທັງພາບເຄື່ອນໄຫວ ແລະ ມີສຽງປະກອບ.ບັນຫາດັ່ງກ່າວ ໄດ້ສອດຄ່ອງກັບແນວຄິດຂອງ Walinthalasak (2008:9-10) ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ກ່າວໄວ້ວ່າການນຳໃຊ້ສື່ອອນລາຍໃນສັງຄົມປັດຈຸບັນນີ້ ແມ່ນຮູບແບບການພັດທະນາວຽກງານຂອງສື່ມວນຊົນ ເຊິ່ງມີໜ້າທີ່ຕ້ອງປະຕິບັດຕາມແນວທາງຂອງພັກ, ຄຳສັ່ງແນະນຳຂອງກະຊວງຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ, ພາຍໃຕ້ການຊີ້ນຳຂອງອົງຄະພັກແຂວງ, ບັນດາພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນຮູບປະທຳຍິ່ງຂຶ້ນ. ແຕ່ເຖິງຢ່າງໃດກໍຕາມການນຳໃຊ້ສື່ອອນລາຍ ຕ້ອງປະຕິບັດຫຼັກການນຳໃຊ້ສື່ຢ່າງຖືກຕ້ອງ ແລະ ເໝາະສົມ ເຊິ່ງສອດ ຄ່ອງກັບແນວຄິດຂອງ VongkeoPhothong (2010) ໄດ້ເວົ້າວ່າ ການນຳໃຊ້ເຄືອຂ່າຍສັງຄົມອອນລາຍ (Social Networking) ໝາຍເຖິງເວັບໄຊ້ທີ່ເຊື່ອມໂຍງຜູ້ຄົນໄວ້ນຳກັນ ໂດຍເວັບໄຊເຫຼົ່ານີ້ ຈະມີພື້ນທີ່ໃຫ້ຜູ້ຄົນເຂົ້າມາຮູ້ຈັກກັນມີການໃຫ້ພື້ນທີ່ບໍລິການເຄື່ອງມືຕ່າງໆ ເພື່ອອຳນວຍຄວາມສະດວກໃນການສ້າງເຄືອຂ່າຍສຳລັບເປັນແຫຼ່ງເຜີຍແຜ່ຂໍ້ມູນສ່ວນຕົວ, ບົດຄວາມ, ຜົນງານເປັນທີ່ພົບປະສະແດງຄວາມຄິດເຫັນ, ແລກປ່ຽນປະສົບການ ຫຼື ຄວາມສົນໃຈຮ່ວມກັນລວມໄປເຖິງເປັນແຫຼ່ງຂໍ້ມູນຂະໜາດໃຫຍ່ທີ່ຜູ້ໃຊ້ສາມາດຊ່ວຍກັນສ້າງເນື້ອຫາຂຶ້ນໄດ້ຕາມຄວາມສົນໃຈຂອງແຕ່ລະບຸກຄົນ ເຊັ່ນ ປະເພດແຫຼ່ງຂໍ້ມູນໃຫ້ຄວາມຮູ້, ເຄືອຂ່າຍທາງສັງຄົມ, ປະເພດສື່, ປະເພດຊື້ຂາຍເປັນຕົ້ນ. ສອດຄ່ອງກັບແນວຄິດຂອງ Schramm, (1973) ໄດ້ຂຽນໄວ້ວ່າ ຫຼັກການນຳໃຊ້ສື່ສັງຄົມອອນລາຍລາຍຕ້ອງປະຕິບັດແມ່ນການສ້າງປະສົບການ ເຊິ່ງເປັນປັດໄຈທີ່ເຮັດໃຫ້ຜູ້ສົ່ງສະແຫວງຫາຂ່າວສານທີ່ແຕກຕ່າງກັນ. ການປະເມີນສາລະປະໂຫຍດຂອງຂ່າວສານທີ່ຜູ້ຮັບສານສະແຫວງຫາເພື່ອຕອບສະໜອງຈຸດປະສົງຂອງຕົນອັນໃດອັນໜຶ່ງ ແລະພູມຫລັງທີ່ແຕກຕ່າງກັນເຮັດໃຫ້ບຸກຄົນມີຄວາມສົນໃຈແຕກຕ່າງ.

ການພັດທະນາວຽກງານສື່ສານມວນຊົນຂອງກະຊວງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກໍຄື ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຂອງແຕ່ລະແຂວງ ສອດຄ່ອງກັບແນວຄິດຂອງ Walinthalasak (2008:11-12) ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ເວົ້າວ່າ ລັດໄດ້ສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນຂອງລັດໃຫ້ມີການຂະຫຍາຍຕົວຢ່າງກວ້າງຂວາງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ. ພ້ອມນີ້ ຍັງສອດຄ່ອງກັບ ຍຸດທະສາດການພັດທະນາວຽກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025 ຂອງ Ministry of Information, Culture and Tourism, ສະບັບລົງວັນທີ 1 ມິຖຸນາ 2016 ໄດ້ວາງແນວທາງການພັດທະນາວຽກງານສື່ມວນຊົນໄວ້ 7 ແຜນງານ ໃນນັ້ນ ມີແຜນພັດທະນາຫຼັກການນຳໃຊ້ສື່ອອນລາຍ.ສອດຄ່ອງກັບແນວຄິດຂອງ Khaykhamphithoune (2020) ວຽກງານສື່ສານມວນຊົນສິ່ງທີ່ຈະຕ້ອງເອົາໃຈໃສ່ຕໍ່ສື່ມວນຊົນໃນຕໍ່ໜ້າຕ້ອງປັບປຸງສ້ອມແປງພື້ນ ຖານໂຄງລ່າງ, ວັດຖຸເຕັກນິກທີ່ມີຢູ່ແລ້ວໃຫ້ສາມາດໃຊ້ການໄດ້ປົກກະຕິ ພ້ອມທັງ ຂະຫຍາຍເຄືອຂ່າຍໄປສູ່ລະບົບດິຈິຕອນໃຫ້ກວມທຸກ ພື້ນທີ່ພາຍໃນປະເທດ ແລະ ກວ້າງໄກເຊື່ອມຈອດ ສາກົນ ໃຫ້ເປັນຮູບປະທຳຫຼາຍຂຶ້ນ. ພ້ອມນີ້ ລັດຊຸກຍູ້ໃຫ້ອົງການສື່ມວນຊົນທຸກພາກສ່ວນເປັນເຈົ້າການສ້າງຄວາມເຂັ້ມແຂງດ້ານວິຊາການ, ກຸ້ມຕົນເອງດ້ານການເງິນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຜະລິດ, ການກະຈາຍ ແລະ ການຈຳໜ່າຍຜະລິດຕະພັນສື່ມວນຊົນທີ່ຖືກຕ້ອງຕາມກົດໝາຍ. ສອດຄ່ອງກັບແນວຄິດຂອງ Yathotou (2016) ໄດ້ໃຫ້ທັດສະນະວ່າສື່ມວນຊົນລາວທີ່ເປັນປາກກະບອກສຽງຂອງ ພັກ ແລະ ລັດຖະບານຕ້ອງສືບຕໍ່ປັບປຸງດ້ານເນື້ອໃນ ໃຫ້ດີຂຶ້ນກວ່າເກົ່າ ເພື່ອສາມາດແຂ່ງຂັນກັບສື່ອອນ ລາຍທີ່ໄດ້ຮັບນິຍົມສູງຈາກສັງຄົມ. ນອກຈາກນີ້ ລັດຊຸກຍູ້ ແລະ ເປີດກວ້າງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດມີສ່ວນຮ່ວມ ແລະ ລົງທຶນ ເຂົ້າໃນການພັດທະນາວຽກງານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ, ຮັບປະກັນການເປັນກະບອກສຽງຂອງການຈັດຕັ້ງ ພັກ, ລັດ ແລະ ສັງຄົມ ໂດຍສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ; ຮັບປະກັນລັກສະນະຂອງສື່ມວນຊົນ; ຮັບປະກັນໃຫ້ພົນລະເມືອງລາວໄດ້ປະຕິບັດສິດເສລີພາບ ແລະ ພັນທະຂອງຕົນດ້ານສື່ມວນຊົນ, ປົກປ້ອງຜູ້ສະໜອງຂໍ້ມູນຂ່າວສານ, ປະກອບຄຳເຫັນ, ສະແດງທັດສະນະຕໍານິຕິຊົມ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

ການນຳໃຊ້ສື່ສັງຄົມຢ່າງສ້າງສັນເຂົ້າໃນການພັດທະນາວຽກງານສື່ສານມວນຊົນ ຕ້ອງເອົາໃຈໃສ່ເຖິງຫຼັກການ ແລະ ການປະຕິບັດທົ່ວໄປ, ຫຼັກການຂອງການສົ່ງຂໍ້ມູນ, ຫຼັກການຮັບຜິດຊອບ ສອດຄ່ອງກັບຫຼັກການນຳໃຊ້ສື່ຂອງພະແນກຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ທີ່ໄດ້ນຳໃຊ້ຫຼັກການນຳໃຊ້ສື່ສັງຄົມຢ່າງສ້າງສັນເຂົ້າໃນການພັດທະນາວຽກງານວິທະຍຸ, ໂທລະພາບ, ໜັງສືພິມ ເຊິ່ງຈາກການລົງເກັບກຳຂໍ້ມູນ ໃນຄັ້ງວັນທີ 19 ມີນາ 2024 ຈາກພະນັກງານຜູ້ທີ່ຮັບຜິດຊອບວຽກງານວິທະຍຸ, ໂທລະພາບ, ໜັງສືພິມຂອງແຂວງຫຼວງພະບາງໃຫ້ຮູ້ວ່າ ຫຼັກການນຳໃຊ້ສື່ສັງຄົມເຂົ້າໃນການພັດທະນາວຽກງານວິທະຍຸ, ໂທລະພາບ, ໜັງສືພິມ ເຫັນວ່າ ມີຫຼາຍຫຼັກການ ທີ່ນຳມາປະຕິບັດໃຊ້ໃນສື່ສັງຄົມອອນລາຍ ເຊັ່ນ ເຜີຍແຜ່ປະຊາສຳພັນໃນນາມອົງກອນ, ປະຊາສຳພັນ ທີ່ກ່ຽວຂ້ອງກັບການສື່ສາທາລະນະ ແລະ ການເຜີຍແຜ່ຂ່າວ ເປັນຕົ້ນ.

ໃນໄລຍະຜ່ານມາມີນັກຄົ້ນຄວ້າຫຼາຍທ່ານໃຫ້ຄວາມສົນໃຈສຶກສາກ່ຽວສື່ສັງຄົມອອນລາຍທີ່ມີຫຼາຍລັກສະນະແຕກຕ່າງກັນ ເຊັ່ນ

SatunuWat (2019) ໄດ້ສຶກສາພະລັງສື່ມວນຊົນໃນສື່ສັງຄົມອອນລາຍ ໂດຍມີຈຸດປະສົງເພື່ອສຶກສາການສ້າງຕົວຕົນຂອງ ສື່ມວນຊົນໃນສື່ສັງຄົມອອນລາຍ; Chiewpanith (2012) ໄດ້ສຶກສາການພັດທະນາຮູບແບບການນຳໃຊ້ສື່ທາງສັງຄົມອອນລາຍ ໂດຍມີຈຸດປະສົງເພື່ອສຶກສາພັດທະນາຮູບແບບການໃຊ້ສື່ທາງສັງຄົມອອນລາຍ. Thipphaphone et al (2019) ໄດ້ສຶກສາການພັດທະນາການຮຽນ-ການສອນ ວິຊາຄອມພິວເຕີພື້ນຖານ ໂດຍໃຊ້ນຳໃຊ້ວິດີໂອຊ່ວຍສອນສຳລັບນັກສຶກສາຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ໂດຍມີຈຸດປະສົງເພື່ອສ້າງຊຸດການສອນວິຊາຄອມພິວເຕີພື້ນຖານ ໂດຍນຳໃຊ້ວິດີໂອ ຊ່ວຍສອນ.

ການສຶກສາຄັ້ງນີ້ ມີຈຸດປະສົງເພື່ອສຶກສາຄວາມຕ້ອງການພັດທະນາຫຼັກການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາວຽກງານສື່ສານມວນຊົນ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ການສຶກສາຄົ້ນຄວ້າໃນຄັ້ງນີ້ ເປັນການສຶກສາດ້ານປະລິມານ ເຊິ່ງກຸ່ມເປົ້າໝາຍເພື່ອການສຶກສາຄົ້ນຄວ້າແມ່ນ ພະນັກງານຂອງພະແນກຖະແຫຼງຂ່າວທັງໝົດ 29 ທ່ານ, ຍິງ 10 ທ່ານ ເນື່ອງຈາກວ່າກຸ່ມເປົ້າໝາຍມີຈຳນວນໜ້ອຍ ຈຶ່ງໄດ້ສຸ່ມຕົວຢ່າງແບບເຈາະຂອງ LuangLat (2016:63) ດັ່ງຈຶ່ງໄດ້ກຸ່ມຕົວຢ່າງທັງໝົດ 29 ທ່ານ.

### 2.2 ເຄື່ອງມື

ການສຶກສາຄົ້ນຄວ້າໃນຄັ້ງນີ້ແມ່ນໄດ້ນຳໃຊ້ແບບສອບຖາມເປັນເຄື່ອງມືຫຼັກໃນການເກັບກຳຂໍ້ມູນ ໂດຍການດັດປັບແບບສອບຖາມຕາມແນວຄິດທິດສະດີການສ້າງເຄື່ອງມືຂອງ LuangLat (2016:63) ພາຍຫຼັງສ້າງເຄື່ອງມືສຳເລັດແລ້ວ ໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານ 3 ທ່ານ ກວດຄວາມຖືກຕ້ອງ ແລະ ເໝາະສົມຕາມຂອບເຂດຂອງການສຶກສາ  ເຊິ່ງຜົນການປະເມີນຄວາມສອດຄ່ອງ ແຕ່ລະຂໍ້ຄຳຖາມແມ່ນຄ່າ IOC ຢູ່ລະຫວ່າງ 0.66-1.00

ເຊິ່ງເນື້ອໃນຂອງແບບສອບຖາມແມ່ນໄດ້ແບ່ງອອກເປັນ 2 ພາກສ່ວນ ຄື: ພາກສ່ວນທີ 1 ແມ່ນຂໍ້ມູນສ່ວນຕົວ, ພາກສ່ວນທີ 2 ແມ່ນສອບຖາມຂໍ້ມູນກ່ຽວກັບຄວາມຕ້ອງການພັດທະນາຫຼັກການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາສື່ມວນຊົນເຊິ່ງປະກອບມີຫຼັກການ ແລະ ການປະຕິບັດທົ່ວໄປ, ຫຼັກການຂອງການສົ່ງຂໍ້ມູນ, ຫຼັກການຮັບຜິດຊອບຕາມທິດສະດີຂອງ (Ekphowat, 2016:6).

### 2.3 ການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນເພື່ອການສຶກສາໃນຄັ້ງນີ້ ແມ່ນເກັບກຳຂໍ້ມູນແບບງ່າຍດາຍ ດ້ວຍວິທີການນຳແບບສອບຖາມໄປຢາຍໃຫ້ກຸ່ມເປົ້າໝາຍຕອບ ໂດຍໃຫ້ເວລາໃນການຕອບ 15-20 ນາທີ ແລ້ວ ເກັບແບບສອບຖາມຄືນ ເຊິ່ງສາມາດເກັບແບບສອບຖາມຄືນໄດ້ທັງໝົດ 29 ທ່ານ ເທົ່າກັບ 100%.

### 2.4 ການວິເຄາະຂໍ້ມູນ ແລະສະຖິຕິທີ່ໃຊ້

ພາຍຫຼັງເກັບຂໍ້ມູນສຳເລັດແລ້ວ ຜູ້ສຶກສາໄດ້ກວດສອບຄວາມຖືກຕ້ອງ ຂອງແບບສອບຖາມແຕ່ລະຊຸດ. ຈາກນັ້ນ, ເອົາຂໍ້ມູນທັງໝົດໄປວິເຄາະໂດຍນຳໃຊ້ Program SPSS (2022) ເພື່ອຊອກຫາຄ່າສະເລ່ຍ$Mean$ ແລະ ຄ່າຜັນປ່ຽນມາດຕະຖານ (SD). ເຊິ່ງໄດ້ວິເຄາະຜົນໄປຕາມ 5 ລະດັບ ຕາມເກນຂອງ Patton, (1990) ຄື:

5.ຄະແນນສະເລ່ຍ 4.50-5.00 ໝາຍເຖິງ ລະດັບຫຼາຍທີ່ສຸດ

4.ຄະແນນສະເລ່ຍ 3.50-4.49 ໝາຍເຖິງ ລະດັບຫຼາຍ

3.ຄະແນນສະເລ່ຍ 2.50-3.49 ໝາຍເຖິງ ລະດັບປານກາງ

2.ຄະແນນສະເລ່ຍ 1.50-2.49 ໝາຍເຖິງ ລະດັບໜ້ອຍ

1.ຄະແນນສະເລ່ຍ 1.00-1.49 ໝາຍເຖິງ ລະດັບໜ້ອຍທີ່ສຸດ

## 3. ຜົນການຄົ້ນຄວ້າ

ຈາກການສຶກສາ ພົບວ່າ ຄວາມຕ້ອງການພັດທະນາໜ່ວຍງານໃນອົງກອນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ$Mean = 3.79$ ແລະ ຄ່າຜັນປ່ຽນມາດຕະຖານ SD = 0.90 ແມ່ນຄວາມຕ້ອງການຈັດຝຶກອົບກ່ຽວກັບການໂຄສະນາໜ່ວຍງານໃນອົງກອນຜ່ານສື່ອອນລາຍໃຫ້ກວ້າງຂວາງຂຶ້ນກວ່າເກົ່າ.  ຄວາມຕ້ອງການເຜີຍແຜ່ປະຊາສຳພັນໃນນາມອົງກອນ ຢູ່ໃນລະດັບຫຼາຍ 3.93 ແລະ ຄ່າ SD = 0.96 ແມ່ນຄວາມຕ້ອງການເຜີຍແຜ່ປະຊາສຳພັນເລື່ອງສື່ອອນລາຍໃນວ່ອງໄວທັນໃຈ, ທັນເຫດການ. ຄວາມຕ້ອງການພັດທະນາດ້ານຄວນລະມັດລະວັງໃນການໃຊ້ຖ້ອຍຄຳ ແລະ ພາສາ ຂອງທ່ານໃຫ້ຖືກຕ້ອງແມ່ນມີຄວາມຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 4.38 ແລະ ຄ່າ SD =  0.68 ເຊິ່ງຄວາມຕ້ອງການທີ່ຈະພັດທະນາແມ່ນຖ້ອຍຄຳ ສຳນວນພາສາ ທີ່ຈະນຳໃຊ້ລົງຢູ່ໃນສື່ອອນລາຍ, ຄວາມຖືກຕ້ອງເຊັດເຈນ ເພື່ອດຶງດູດຄວາມສົນໃຈຜູ້ອ່ານຫຼາຍຂຶ້ນ. ຕ້ອງການພັດທະນາດ້ານຄວນລະເວັ້ນການຕອບໂຕ້ ດ້ວຍຄວາມຮຸນແຮງ ແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍ ໂດຍມີຄ່າ Mean = 4.38 ແລະ ຄ່າ SD = 0.68 ແມ່ນຕ້ອງການພັດທະນາການລົງຂ່າວໃນສື່ອອນລາຍທີ່ເຫັນວ່າມີຜົນກະທົບຮຸນແຮງຕໍ່ກັບອົງກອນ, ຕໍ່ແມ່ຍິງ ແລະເດັກນ້ອຍ. ຄວາມຕ້ອງການພັດທະນາດ້ານຄວນຫຼີກເວັ້ນການນຳໃຊ້ສື່ສັງຄົມອອນລາຍ ແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 4.14 ແລະ ຄ່າ SD = 1.03 ເຊິ່ງຕ້ອງການພັດທະນາວິທີການແກ້ໄຂການຳໃຊ້ສື່ສັງຄົມອ່ອນລາຍທີ່ອາດຈະສົ່ງຜົນກະທົບດ້ານລົບຕໍ່ອົງກອນ. ຄວາມຕ້ອງການພັດທະນາດ້ານຄວນໃຊ້ຮູບພາບການນຳໃຊ້ສື່ສັງຄົມອອນລາຍລາຍແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 3.69 ແລະ SD = 0. 89 ເຊິ່ງຕ້ອງການຝຶກອົບຮົມເລື່ອງການນຳໃຊ້ຮູບພາບ ຫຼື ການເລືອກຮູບ, ການຂໍອະນຸມັດການນຳໃຊ້ພາບນຳພາກສ່ວນທີ່ກ່ຽວຂ້ອງ ເພື່ອບໍ່ໃຫ້ມີຜົນກະທົບລິຂະສິດເຈົ້າຂອງຮູບພາບ, ຄວາມຕ້ອງການພັດທະນາດ້ານອົງການຈັດຕັ້ງ ຫຼື ພະແນກທີ່

ສັງກັດການນຳໃຊ້ສື່ສັງຄົມອອນລາຍແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 4.21 ແລະ ຄ່າ SD = 1.11 ເຊິ່ງຕ້ອງການພັດທະນາດ້ານການເຜີຍແຜ່ແນວທາງນະໂຍບາຍສື່ອອນລາຍ, ລະບຽບກົດໝາຍ, ການນຳໃຊ້ສື່ໃຫ້ທົ່ວເຖິງ. ຄວາມຕ້ອງການພັດທະນາດ້ານຄວບມັດລະວັງຂໍ້ຄວາມ ຂອງການນຳໃຊ້ສື່ສັງຄົມອອນລາຍ ແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 4.21 ແລະ ຄ່າ SD = 1.11ແມ່ນຕ້ອງພັດການພັດທະນາດ້ານຫຼັກການນຳໃຊ້ຂໍ້ຄວາມ ຫຼືຖ້ອຍຄຳ ໃນສື່ອອນລາຍ ຄວາມຕ້ອງການພັດທະນາດ້ານການນຳໃຊ້ສື່ສັງຄົມທີ່ສັງກັດໃນໜ່ວຍງານສື່ສານ ຂອງການນຳໃຊ້ສື່ສັງຄົມອອນລາຍ ແມ່ນຕ້ອງການພັດທະນາຢູ່ໃນລະດັບຫຼາຍໂດຍມີຄ່າ Mean = 4.31 ແລະ ຄ່າ SD = 0.54. ເຊິ່ງຕ້ອງການຈັດຝຶກອົບຮົມໃຫ້ພະນັກງານສື່ມວນຊົນໃຫ້ມີຄວາມຊຳນານ ແລະການນຳໃຊ້ສື່ອອນລາຍແຕ່ລະປະເພດ ຫຼາຍຂຶ້ນ.

## 4. ວິພາກຜົນ

ຄວາມຕ້ອງການພັດທະນາຫຼັກການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາວຽກງານສື່ສານມວນຊົນຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ແມ່ນມີຄວາມຕ້ອງພັດທະນາ 9 ຫຼັກການຢູ່ໃນລະດັບຫຼາຍ ເຊັ່ນ ຕ້ອງການພັດທະນາໜ່ວຍງານໃນອົງກອນ, ຕ້ອງການພັດທະນາການເຜີຍແຜ່ປະຊາສຳພັນໃນນາມອົງກອນ, ຕ້ອງການພັດທະນາດ້ານຄວບລະມັດລະວັງໃນການໃຊ້ຖ້ອຍຄຳ ແລະ ພາສາ ໃຫ້ຖືກຕ້ອງ, ຕ້ອງການພັດທະນາດ້ານຄວບລະເວັ້ນການຕອບໂຕ້ ດ້ວຍຄວາມຮຸນແຮງ, ຕ້ອງການພັດທະນາດ້ານຄວບຫຼີກເວັ້ນການນຳໃຊ້ສື່ສັງຄົມອອນລາຍ,ຕ້ອງການພັດທະນາດ້ານຄວບໃຊ້ຮູບພາບການນຳໃຊ້ສື່ສັງຄົມອອນລາຍລາຍ, ຕ້ອງການພັດທະນາດ້ານອົງການຈັດຕັ້ງ ຫຼືພະແນກທີ່ສັງກັດການນຳໃຊ້ສື່ສັງຄົມອອນລາຍ, ຕ້ອງການພັດທະນາດ້ານຄວບມັດລະວັງຂໍ້ຄວາມ ຂອງການນຳໃຊ້ສື່ສັງຄົມອອນລາຍ, ແລະ ຕ້ອງການພັດທະນາດ້ານການນຳໃຊ້ສື່ສັງຄົມທີ່ສັງກັດໃນໜ່ວຍງານສື່ສານ ຂອງການນຳໃຊ້ສື່ສັງຄົມອອນລາຍ ເຊິ່ງສອດຄ່ອງກັບທິດສະດີຂອງ Ekphowat (2016) ໄດ້ຂຽນໄວ້ວ່າຫຼັກການນຳໃຊ້ສື່ອອນລາຍທາງສັງຄົມຢ່າງສ້າງສັນເຂົ້າໃນການພັດທະນາວຽກງານສື່ສານມວນຊົນ ປະກອບມີຄື ຫຼັກການ ແລະ ການປະຕິບັດທົ່ວໄປ,ຫຼັກການຂອງການສິ່ງຂໍ້ມູນ, ຫຼັກການຮັບຜິດຊອບ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງ Ekphokhawat (2021) ທີ່ໄດ້ສຶກສາພຶດຕິກຳການໃຊ້ສື່ສັງຄົມອອນລາຍຂອງຄົນເຈນເນເລຊັ່ນແຊັດໃນຍຸກນິວນໍມໍ ໃນກຸງເທບມະຫານະຄອນ ພົບວ່າ ຫຼັກການທີ່ຄວນພັດທະນາຄື ຫຼັກການພັດທະນາໜ່ວຍງານໃນອົງກອນ ຂອງສື່ອອນລາຍ, ຫຼັກການເຜີຍແຜ່ປະຊາສຳພັນໃນນາມອົງກອນ ຂອງສື່ອອນລາຍ, ຫຼັກການທີ່ຄວນລະມັດລະວັງໃນການໃຊ້ຖ້ອຍຄຳ ແລະ ພາສາໃນສື່ອອນລາຍ, ຫຼັກການຄວບຫຼີກເວັ້ນການນຳໃຊ້ສື່ສັງຄົມອອນລາຍລາຍ, ຫຼັກການພັດທະນາອົງການຈັດຕັ້ງ ຫຼືພະແນກກທີ່ສັງກັດ ໃນສື່ອອນລາຍແມ່ນມີຄວາມຕ້ອງການພັດທະນາຫຼາຍສົມຄວນ; ແຕ່ຈຸດທີ່ມີຄວາມຕ້ອງການພັດທະນາໜ້ອຍພົບວ່າ ຫຼັກການທີ່ຄວນໃຊ້ຮູບພາບໃນສື່ອອນລາຍ,ຫຼັກການທີ່ຄວນມັດລະວັງຂໍ້ຄວາມໃນສື່ອອນລາຍ.

## 5. ສະຫຼຸບ

ວຽກງານສື່ສານມວນຊົນ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ມີຄວາມຕ້ອງການພັດທະນາຫຼັກການ ການນຳໃຊ້ສື່ອອນລາຍເຂົ້າໃນການພັດທະນາວຽກງານສື່ສານມວນຊົນ ຢູ່ໃນລະດັບຫຼາຍ ຄື ພະນັກງານສ່ວນຫຼາຍແມ່ນຕ້ອງການໃຫ້ພາກສ່ວນກ່ຽວຂ້ອງມີການຈັດຝຶກອົບຮົມກ່ຽວຫຼັກການຂອງການສິ່ງຂໍ້ມູນ ຂອງການນຳໃຊ້ສື່ອອນລາຍເຊັ່ນ ວິທີການນຳໃຊ້ຮູບພາບ, ການຂຽນຂໍ້ຄວາມ, ການໃຊ້ສຳນວນພາສາຄຳເວົ້າໃນການໂຕຕອບໃນອອນລາຍ, ຂໍ້ຄວນລະວັງໃນການໃຊ້ສື່ອອນລາຍ, ຮູບແບບວິທີການເຜີຍແຜ່ປະຊາສຳພັນໃນອົງກອນ ແລະ ອື່ນໆ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Creswell, J .W. (2014). *kanookaebb kankhonkhva vithikan vithikan dan khunnaphab paliman lae aebb pasom 4th ed Thousand Oaks CA S*age Retrieved November 1 2016 from

Chiewpanith, X. (2012). *Studying the development of online social media usage patterns*, Phayao University, Thailand

Ekphowat, M. (2016). *Creative use of social media.* Chulalongkorn University.

Ekphokhawat, M. (2021). *Creative use of social media.* Chulalongkorn University

Khaykhamphithoune, K. (2020). *Report to the 5th General Conference of the Party Committee of the Ministry of Education* .

Luang Lat, P. (2016). *Research Skills.* Printed in Hanoi, Vietnam.

Ministry of Information, Culture and Tourism. (2016 ). *Strategy for the Development of Information, Culture and Tourism until 2025.*

Patton, M. Q. (1990). *Qualitative evaluation and research methods* (2nd ed.).

SatunuWat, P. (2019). *Study the power of media in online social media*. Mahasarakham

SOMCHAI, V. (2017). *The influence of social media tourism information perception on Thai tourists' decision to travel in Nakhon Si Thammarat Province.*

Rueangrat, R. (2022) Basic SPSS User ManualFor project evaluation processing.

Schramm,W. (1973). *Study the power of media in online social media*. Mahasarakham University, Thailand.

Thipphaphone, K .(2019). *studied the development of teaching and learning in basic computer science using video as teaching aids for students of the Faculty of Education*, Souphanouvong University.

VongkeoPhothong, W. (2010). Using online social networks Social Networking.

Yathotou, P. (2016). *Report to the 5th General Conference of the Party Committee of the Ministry of Education*. University, Thailand.